ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 11 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 10 ມັງກອນ 2020

## ແຈ້ງການ

ເຖິງ: ບັນດາສະຖາບັນການເງິນທີ່ເປັນສະມາຊິກ ຂໍ້ມູນຂ່າວສານສິນເຊື່ອ ທະນາຄານແຫ່ງ ສປປ ລາວ.

ເລື່ອງ: ການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 47/ສພຊ ລົງວັນທີ 19 ມິຖຸນາ 2018;
- ອີງຕາມດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ, ລົງວັນທີ 19 ກໍລະກົດ 2019;
- ອີງຕາມຂໍ້ຕົກລົງວ່າດ້ວຍການສ້າງຕັ້ງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ສະບັບເລກທີ 919/ທຫລ, ລົງວັນທີ 04 ຕຸລາ 2019.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ຕາມດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ, ລົງວັນທີ 19 ກໍລະກົດ 2019 ມາຮອດປະຈຸບັນ ສູນຂໍ້ມູນຂ່າວສານສິນເຊື່ອໄດ້ຖືກຍົກລະດັບ ແລະ ປະກາດສ້າງຕັ້ງເປັນບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຢ່າງເປັນທາງການໃນວັນທີ 17 ທັນວາ 2019. ສະນັ້ນ, ເພື່ອປະຕິບັດຕາມພາລະບົດບາດຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນການຈັດຕັ້ງປະຕິບັດວຽກງານ ຫ້ອງການ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍແຈ້ງມາຍັງບັນດາສະມາຊິກຂອງສູນຂໍ້ມູນຂ່າວສານສິນເຊື່ອ ໃຫ້ໄປເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອກັບບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ນັບຕັ້ງແຕ່ເດືອນ ມັງກອນ 2020 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວອິງວິຈິດ